ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=====000=====----

ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

ເລກທີ 031 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 31 AUG 2015

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຕະຫຼາດຫຼັກຊັບລາວ ໃຫ້ເປັນຜູ້ກຳນົດລະຫັດຫຼັກຊັບແຫ່ງຊາດລາວ

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມບົດບັນທຶກກອງປະຊຸມ ຄຄຊ ສະບັບເລກທີ 007/ຄຄຊ ລົງວັນທີ 23 ກັນຍາ 2013;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງ ສຳນັກງານ ຄຄຊ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສະບັບເລກທີ ສະບັບເລກທີ 023/ສຄຄຊ ລົງວັນທີ 14 ສິງຫາ 2015.

ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ ດັ່ງນີ້:

**ມາດຕາ 1.** ແຕ່ງຕັ້ງ ຕະຫຼາດຫຼັກຊັບລາວ ເປັນຜູ້ກຳນົດລະຫັດຫຼັກຊັບແຫ່ງຊາດລາວ.

**ມາດຕາ 2.** ມອບໃຫ້ ສຳນັກງານ ຄຄຊ ສົມທົບກັບ ຕະຫຼາດຫຼັກຊັບລາວ ຄົ້ນຄວ້າກຳນົດ ສິດ ແລະ ໜ້າທີ່ ຂອງຜູ້ກຳນົດລະຫັດຫຼັກຊັບແຫ່ງຊາດລາວ ເພື່ອສະເໜີ ປະທານຄະນະກຳມະການຄຸ້ມຄອງຫຼັກຊັບພິຈາລະນາຮັບຮອງ.

**ມາດຕາ 3.** ສຳນັກງານ ຄຄຊ, ຕະຫຼາດຫຼັກຊັບລາວ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ**

ຄະນະກຳມະການຄຸ້ມຄອງຫຼັກຊັບ
ປະທານ

**ດຣ.ບຸນປອນ ບຸດຕະນະວົງ**